ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 25 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 25 JUN 2015

ສໍານັກງານ ຄຄຊ
ເລີ່ ເລກທີ...656...
ວັນທີ..25 JUN 2015
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈໍາອາທິດ
ທີ 15/06/2015 ຫາ 19/06/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 09/06/2015 | ອາທິດນີ້ 16/06/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,1290 | 1,1274 | 0,14% |
| ໂດລາ/ເຢນ | 124,44 | 123,55 | 0,72% |
| ໂດລາ/ບາດ | 33,73 | 33,68 | 0,16% |
| ໂດລາ/ເປໂຊ | 45,02 | 45,14 | -0,27% |
| ໂດລາ/ຣູເປັຍ | 13.330,78 | 13.342,67 | -0,09% |
| ໂດລາ/ໂດລາສິງກະໂປ | 1,3536 | 1,3459 | 0,57% |
| ໂດລາ/ຢວນ | 6,2048 | 6,2076 | -0,04% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 3,12% ຈາກ 58,92 ໂດລາ/ບາເຣວ ມາເປັນ 60,76 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,67% ຈາກ 1.176,82 ໂດລາ/ອອນ ມາເປັນ 1.184,76 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,01% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,13% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,33% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 1,15% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,52% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,32% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 1,59% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 2,85% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 09/06/2015 | | | ອາທິດນີ້ 16/06/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.102,25 | 8.134,81 | 8.121,74 | 8.103,57 | 8.134,86 | 8.120,78 | -0,02% | 0,00% | 0,01% |
| ບາດ | 242,28 | 243,30 | 243,08 | 243,19 | 244,29 | 243,88 | -0,38% | -0,40% | -0,33% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.110,48 | 8.139,94 | 8.126,56 | 8.122,67 | 8.152,00 | 8.137,33 | -0,15% | -0,15% | -0,13% |
| ບາດ | 241,41 | 242,53 | 241,82 | 243,65 | 245,60 | 244,63 | -0,92% | -1,25% | -1,15% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,10% | 0,06% | 0,06% | 0,24% | 0,21% | 0,20% | | | |
| ບາດ | -0,36% | -0,32% | -0,52% | 0,19% | 0,54% | 0,30% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,52% ທຽບໃສ່ວັນທີ 12/06/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 35,13%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,46% ເມື່ອທຽບໃສ່ວັນທີ 12/06/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,28%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 15/06/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 10,60 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 57,11 ລ້ານໂດລາ ແລະ ຂາຍໂດລາໄດ້ 46,52 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.492,03 ລ້ານບາດ (ໃນນີ້ ຊື້ບາດໄດ້ 435,49 ລ້ານບາດ ແລະ ຂາຍບາດໄດ້ 1.927,52 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 3,89% ແຕ່ເພີ່ມຂຶ້ນ 29,13% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 8,80 ລ້ານໂດລາ ແລະ ເງິນບາດມີຈຳນວນ 310,90 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 36,50 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 108,01 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 52,40 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 1.377,71 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 09/06/2015 | | ອາທິດທີ 15/06/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 22,63 | 190,26 | 22,69 | 177,85 | 0,26% | -6,52% |
| - ທ/ຄທຸລະກິດອື່ນໆ | 39,02 | 160,48 | 34,42 | 257,64 | -11,79% | 60,55% |
| ລວມຊື້: | **61,65** | **350,74** | **57,11** | **435,49** | **-7,37%** | **24,16%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 31,69 | 252,03 | 29,29 | 255,47 | -7,58% | 1,37% |
| - ທ/ຄທຸລະກິດອື່ນໆ | 14,48 | 1.227,22 | 17,22 | 1.672,05 | 18,95% | 36,25% |
| ລວມຂາຍ: | **46,17** | **1.479,25** | **46,52** | **1.927,52** | **0,74%** | **30,30%** |
| ຊື້-ຂາຍສຸດທິ ທທກ | 15,48 | -1.128,51 | 10,60 | -1.492,03 | -31,55% | 32,21% |
| ຜິດດ່ຽງ ຊື້-ຂາຍ | 25,11 | -321,75 | 18,56 | -342,61 | -655,56% | -208,36% |
| ມູນຄ່າການຊື້-ຂາຍ | 107,83 | 1.829,99 | 103,63 | 2.363,01 | -3,89% | 29,13% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 28,00 | 66,92 | 0,00 | 203,99 | | |
| - ທຫລ ຂາຍໃຫ້ ທທກ | 27,56 | 688,00 | 36,50 | 312,00 | | |
| ຊື້-ຂາຍສຸດທິ ທຫລ | **0,44** | **-621,08** | **-36,50** | **-108,01** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **9,58** | **252,43** | **8,80** | **310,90** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,39 | 1.265,88 | 0,12 | 1.377,71 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 38,01 | 0,00 | 52,52 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-37,61** | **1.265,88** | **-52,40** | **1.377,71** | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ປະຈຳເດືອນ 06/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,21% ເພີ່ມຂຶ້ນ 0,02% ຈາກ 1,19% ໃນເດືອນ 05/2015.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 156,9 ລ້ານໂດລາ ສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 17,9% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 898 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 27,19% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 958,69 ຕື້ກີບ ເພີ່ມຂຶ້ນ 34,58% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (12-18/06/2015) ມີຈໍານວນ 1.647 ຄັ້ງ ໂດຍມີມູນຄ່າ 310,11 ຕື້ກີບ ຫຼຸດລົງ 39,71% ຊຶ່ງທະນາຄານສົ່ງເສີມກະສິກໍາ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 412 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.3911,11 ຈຸດ ເພີ່ມຂຶ້ນ 1,18% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 179.229 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,22 ຕື້ກີບ ຫຼຸດລົງ 71,59% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 64,40% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.089 ກີບ/ຮຸ້ນ ຫຼຸດລົງ 7 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 30.462 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 185,49 ລ້ານກີບ ຫຼຸດລົງ 60,76% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 42,77% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,70%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.052 ກີບ/ຮຸ້ນ ເພີ່ມຂຶ້ນ 5 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 146.572 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,03 ຕື້ກີບ ຫຼຸດລົງ 55,96% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 58,38% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,28%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.000 ກີບ/ຮຸ້ນ, ໂດຍໃນອາທິດນີ້ມີການຊື້-ຂາຍພຽງແຕ່ວັນດຽວ. ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,80 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.600 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.095 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,54 ລ້ານກີບ ຫຼຸດລົງ 99,50% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 20% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການຈັດກອງປະຊຸມ: ❶ກອງປະຊຸມຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NCC), ❷ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບກະກຽມການນໍາເຂົ້າອຸປະກອນຕ່າງໆ ເພື່ອຮັບໃຊ້ໂຄງການການນໍາໃຊ້ບັດທະນາຄານຮ່ວມກັນ, ❸ກອງປະຊຸມ ໃນຫົວຂໍ້ "ຄະນະຮັບຜິດຊອບວຽກງານການເຊື່ອມໂຍງຂະແໜງການທະນາຄານໃນກອບ ອົງການການຄ້າໂລກ" ຄັ້ງປະຖົມມະເລີກ ທີ່ ທຫລ;
- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ກອງປະຊຸມເປີດກວ້າງປຶກສາຫາລືຮ່າງຄໍາແນະນໍາວ່າດ້ວຍການລາຍງານທຸລະກິດທີ່ສົງໃສວ່າເປັນການຟອກເງິນ ທີ່ໂຮງແຮງລ້ານຊ້າງ, ❷ກອງປະຊຸມສໍາມະນາໃນຫົວຂໍ້ "ສປປ ລາວ ໂອກາດແຫ່ງການກ້າວ

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

ກະໂດດ" ທີ່ຕະຫຼາດຫຼັກຊັບລາວ, ❸ກອງປະຊຸມສຳມະນາ ໃນຫົວຂໍ້ "Credit Rating" ຂອງ ສສ. ຫວຽດນາມ ທີ່ສະຖາບັນການທະນາຄານ;

- ສຳເລັດການເຂົ້າຮ່ວມຝຶກອົບຮົມໃນຫົວຂໍ້ "ການເຈລະຈາການຄ້າດ້ານການບໍລິການ" ທີ່ບາງກອກ, ປະເທດໄທ.

III. <u>**ແຜນວຽກຈຸດສຸມອາທິດຕໍ່ໄປ:**</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ຄົ້ນຄວ້າລະບຽບວ່າດ້ວຍ Financial Service provider ກ່ຽວກັບສະຖາບັນການເງິນ, ❺ຄົ້ນຄວ້າຮ່າງດຳລັດວ່າດ້ວຍປົກປ້ອງຜູ້ບໍລິໂພກທາງການເງິນ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ກະກຽມການຄັດເລືອກຜົນງານ 10 ປີ ຂອງກົມກອງ ແລະ ບຸກຄົນ (2005-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ພາສີ ພິມມະກອນ